# ອາຊີວະສຶກສາ
# ແບບຄວບຄູ່

"ທັກສະດີ
ມີ
ອະນາຄົດ
ສົດໃສ"



# ກ່ຽວກັບ ອາຊີວະສຶກສາ ແບບຄວບຄູ່ (ອສຄ ຫຼື DCT)

**ຍົກລະດັບຄຸນນະພາບ ແລະ ຄວາມສອດຄ່ອງ ຂອງວຽກງານ ອາຊີວະສຶກສາ ແລະ ເພີ່ມຄວາມສາມາດການຈ້າງງານ ຜ່ານການປະຕິບັດວຽກຕົວຈິງຫຼາຍຂຶ້ນ**

**ຄວາມເປັນມາ:** ບັນດາຫົວໜ່ວຍທຸລະກິດ ໃນ ສປປ ລາວ ພົບບັນຫາການຊອກຫາແຮງງານ ທີ່ມີທັກສະ ແລະ ໃນຂະນະດຽວກັນ ນັກສຶກສາອາຊີວະສຶກສາທີ່ຮຽນຈົບ ກໍບໍ່ສາມາດຊອກວຽກທີ່ກົງກັບຄວາມສາມາດຂອງເຂົາເຈົ້າໄດ້. ດ້ວຍເຫດນີ້, ຈຶ່ງໄດ້ມີການແນະນໍາອາຊີວະສຶກສາແບບຄວບຄູ່ (ອສຄ ຫຼື DCT) ທີ່ເປັນອີກຮູບແບບໜຶ່ງຂອງການຈັດການຮຽນ-ການສອນອາຊີວະສຶກສາ ເພື່ອຮັບປະກັນວ່າ ນັກສຶກສາທີ່ຮຽນຈົບ ໄດ້ກະກຽມທັກສະທີ່ຈໍາເປັນ ແລະ ກົງກັບຄວາມຕ້ອງການຂອງສະຖານປະກອບການ. ວຽກງານ ອສຄ ແມ່ນສະໜັບສະໜູນໂດຍ ໂຄງການພັດທະນາອາຊີວະສຶກສາ ສປປ ລາວ (VELA) ຈັດຕັ້ງປະຕິບັດໂດຍ GIZ ຮ່ວມກັບ ຄູ່ຮ່ວມງານທີ່ສໍາຄັນຈາກກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສຄອຊ).

**ແນວຄວາມຄິດ:** ອາຊີວະສຶກສາແບບຄວບຄູ່ (ອສຄ ຫຼື DCT) ແມ່ນຮູບແບບການຈັດຕັ້ງການຮຽນ-ການສອນ ພາກທິດສະດີ ແລະ ພາກປະຕິບັດຂັ້ນພື້ນຖານຢູ່ ສະຖານອາຊີວະສຶກສາ ແລະ ຝຶກແອບປະຕິບັດຕົວຈິງ ໃນຫົວໜ່ວຍແຮງງານເປັນຕົ້ນຕໍ. ສະຖານປະກອບການ ແລະ ສະຖານອາຊີວະສຶກສາ ຮ່ວມມືກັນວາງແຜນ, ສິດສອນ ແລະ ຈັດຕັ້ງການສອບເສັງ ເພື່ອຮັບປະກັນວ່າ ນັກສຶກສາທີ່ຮຽນຈົບ ມີທັກສະ ແລະ ຄຸນສົມບັດ ທີ່ຕອບສະໜອງຄວາມຕ້ອງການຂອງສະຖານປະກອບການ. ດ້ວຍແນວຄວາມຄິດ ອສຄ ນີ້, ທັງພາກລັດ ແລະ ບັນດາຫົວໜ່ວຍແຮງງານ ມີໜ້າທີ່ຮັບຜິດຊອບຮ່ວມກັນຄື:

## ການອອກແບບ ແລະ ສິດສອນ:

- ຮ່ວມກັນພັດທະນາຫຼັກສູດ ແລະ ຊຸດການຝຶກອົບຮົມ ທີ່ກໍານົດທັກສະ, ຄວາມຮູ້ ແລະ ທັດສະນະຄະຕິ ທີ່ຕ້ອງການໃນການເຮັດວຽກ, ເພື່ອຮັບປະກັນວ່າ ເນື້ອໃນຖືກຕ້ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.
- ຮ່ວມກັນຈັດຕັ້ງ ອສຄ. ເປີເຊັນການຝຶກປະຕິບັດ ຢູ່ສະຖານປະກອບການ ຢ່າງໜ້ອຍບໍ່ຫຼຸດ 50% ຂອງການຝຶກອົບຮົມທັງໝົດ.

## ການສອບເສັງ/ອອກໃບປະກາດ:

- ສະຖານປະກອບການ ແລະ ສະຖານອາຊີວະສຶກສາ ຮ່ວມກັນຈັດຕັ້ງສອບເສັງພາກປະຕິບັດ ແລະ ປາກເປົ່າ.
- ອອກໃບປະກາດໃຫ້ ນັກສຶກສາທີ່ຮຽນຈົບສໍາເລັດ ເຊິ່ງຈໍ້າກາ ແລະ ຮັບຮອງ ໂດຍ ສສກ ແລະ ສຄອຊ.

## ການປະສານງານ & ບໍລິຫານ:

- ສະຖານປະກອບການ ທີ່ສົນໃຈກ່ຽວກັບ ອສຄ ສາມາດພົວພັນກັບ ສູນບໍລິການ ອສຄ ຂອງ ສຄອຊ ຫຼື ໜ່ວຍງານໃຫ້ຂໍ້ມູນອາຊີວະສຶກສາ (TVET Help Desks) ທີ່ຕັ້ງຢູ່ຫ້ອງການສະພາການຄ້າ ແລະ ອຸດສາຫະກໍາແຂວງ ທີ່ກ່ຽວຂ້ອງ ຫຼື ພົວພັນໂດຍກົງ ກັບສະຖານອາຊີວະສຶກສາ ທີ່ຈັດຕັ້ງ ອສຄ.
- ມີການເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງສອງຝ່າຍ ເຊິ່ງກໍານົດຈຸດປະສົງການຮ່ວມມື ພ້ອມບົດບາດໜ້າທີ່.
- ສະຖານປະກອບການ ຈະຄັດເລືອກນັກສຶກສາ ທີ່ສະຖານອາຊີວະສຶກສາ ໄດ້ຮັບເອົາເຂົ້າຮຽນ. ນັກສຶກສາ ແລະ ສະຖານປະກອບການ ເຊັນສັນຍາຮ່ວມກັນ.
- ມີການແລກປ່ຽນທັງສອງຝ່າຍ ແລະ ການກວດກາເປັນປະຈໍາ ເພື່ອຊ່ວຍຕິດຕາມ ຫຼື ດັດປັບການຈັດຕັ້ງປະຕິບັດ ຂອງການຝຶກອົບຮົມ

## ການປະກອບສ່ວນ:

- ສະຖານອາຊີວະສຶກສາ ຮັບຜິດຊອບການຝຶກອົບຮົມ ແລະ ສະຖານທີ່ເຊັ່ນ: ພື້ນຖານໂຄງລ່າງ, ອຸປະກອນ, ເຄື່ອງມື ແລະ ຄູອາຊີວະສຶກສາ.
- ສະຖານປະກອບການ ຮັບຜິດຊອບຄ່າທີ່ພັກ, ອາຫານ, ເດີນທາງ ແລະ ປະກັນໄພ ພ້ອມແຕ່ງຕັ້ງພະນັກງານ ເພື່ອສອນນັກສຶກສາ ໃນຊ່ວງພວກເຂົາຝຶກປະຕິບັດວຽກ ຢູ່ສະຖານປະກອບການ.

## ປະໂຫຍດຂອງ ອສຄ

### ສະຖານປະກອບການ

ສະຖານປະກອບການ ສາມາດຝຶກອົບຮົມກໍາລັງແຮງງານໃນອະນາຄົດ ໂດຍສະໜອງຄວາມຮູ້ວິຊາການ ແລະ ທັກສະທີ່ຈໍາເປັນແກ່ນັກສຶກສາ, ຫຼຸດຜ່ອນຄ່າໃຊ້ຈ່າຍ ໃນການຮັບສະໝັກ ແລະ ຝຶກພະນັກງານເຂົ້າໃໝ່ ໂດຍການຈ້າງນັກສຶກສາ ອສຄ.

### ສະຖານອາຊີວະສຶກສາ

ສະຖານອາຊີວະສຶກສາ ສາມາດປະຢັດຊັບພະຍາກອນ ໂດຍຈັດຕັ້ງປະຕິບັດຝຶກອົບຮົມພຽງ 50% ຫຼື ໜ້ອຍກວ່າ ແລະ ມີຄວາມເຂົ້າໃຈກ່ຽວກັບ ຄວາມຕ້ອງການຂອງຕະຫຼາດແຮງງານທີ່ດີຂຶ້ນ.

### ນັກສຶກສາ

ນັກສຶກສາ ສາມາດພັດທະນາທັກສະໃນສະພາບແວດລ້ອມເຮັດວຽກຕົວຈິງ, ມີໂອກາດໄດ້ຮັບການຊ່ວຍເຫຼືອ ໃນຊ່ວງກໍາລັງຝຶກຈາກບ່ອນເຮັດວຽກ ແລະ ພ້ອມກ້າວສູ່ໂລກແຫ່ງການເຮັດວຽກຕົວຈິງ.

### ສປປ ລາວ

ສປປ ລາວ ຈະມີກໍາລັງແຮງງານ ທີ່ມີທັກສະສີມືສູງ ເຊິ່ງຕອບສະໜອງຄວາມຕ້ອງການຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດຫຼາຍຂຶ້ນ, ນໍາໄປສູ່ການຜະລິດ ແລະ ການເຕີບໂຕດ້ານເສດຖະກິດທີ່ດີ ແລະ ຍືນຍົງຫຼາຍຂຶ້ນ.

## ສາຂາຮຽນ ອສຄ:

ມີສະຖານອາຊີວະສຶກສາຫຼາຍແຫ່ງໃນທົ່ວປະເທດ,ເຊິ່ງໃນນັ້ນກໍລວມທັງວິທະຍາໄລເຕັກນິກ-ວິຊາຊີບຕົວແບບ ອສຄ **4** ແຫ່ງ ທີ່ຈັດການຮຽນ-ການສອນ ແບບຄວບຄູ່ (ອສຄ) ໃນສາຂາຕ່າງໆ. ປັດຈຸບັນ, **14 ສາຂາ** ດ້ານລຸ່ມນີ້ແມ່ນໄດ້ຖືກພັດທະນາ ແລະ ຮັບຮອງແລ້ວ. **8 ສາຂາ** ແມ່ນໄດ້ເປີດສອນແລ້ວຢູ່ ວິທະຍາໄລ-ເຕັກນິກວິຊາຊີບຕົວແບບ ອສຄ ທັງ **4** ແຫ່ງ ໂດຍຮ່ວມມືກັບສະຖານປະກອບການ ທີ່ເປັນຄູ່ຮ່ວມງານ. ຄາດວ່າ **6 ສາຂາ** ຈະເປີດສອນທົ່ວປະເທດໃນອະນາຄົດ.




- ວິທະຍາໄລຕົວແບບ ອສຄ / DCT Flagship Colleges
- ສູນບໍລິການ ອາຊີວະສຶກສາແບບຄວບຄູ່ / DCT Service Center
- ໜ່ວຍງານໃຫ້ຂໍ້ມູນອາຊີວະສຶກສາ / TVET Help Desks

### ພັດທະນາ ສາຂາຮຽນແບບຄວບຄູ່ 6 ສາຂາ

1. ການຈັດການຟາມຜະລິດກະສິກໍາ ແບບປະສົມປະສານ
2. ການກວດກາຄຸນນະພາບ ຜະລິດຕະພັນຕັດຫຍິບ
3. ການບໍາລຸງຮັກສາ-ສ້ອມແປງໄຟຟ້າເຂື່ອນພະລັງງານນໍ້າ
4. ການຕິດຕັ້ງ-ສ້ອມແປງໄຟຟ້າອຸດສາຫະກໍາ
5. ການຕິດຕັ້ງ-ສ້ອມແປງ ເຄື່ອງອີເລັກໂຕຣນິກອຸດສາຫະກໍາ
6. ການກໍ່ສ້າງອາຄານ

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ສະໜັບສະໜູນໂດຍ

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH


**ຈັດພິມໂດຍ:**

Deutsche Gesellschaft fuer Internationale Zusammenarbeit (GIZ) GmbH
ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ



ໂຄງການພັດທະນາອາຊີວະສຶກສາ ສປປ ລາວ (VELA)
ຫ້ອງການ GIZ ລາວ, ບ້ານທ່າພະລານໄຊ, ຖະໜົນ ວັດນາກ, ຕູ້ ປ.ນ 10838
ໂທ: + 856 21 353 605
ແຟັກ: + 856 21 314 408
ອີເມວ: giz-laos@giz.de

www.giz.de/laos (ອັງກິດ); www.giz.de/laos-la (ລາວ)



**ລົງວັນທີ**
ຕຸລາ 2022

**ຮັບຜິດຊອບໂດຍ**: ໂຄງການພັດທະນາອາຊີວະສຶກສາ ສປປ ລາວ (VELA)

**ດັດແກ້ໂດຍ:** ໂຄງການພັດທະນາອາຊີວະສຶກສາ ສປປ ລາວ (VELA)

**ອອກແບບ ແລະ ຈັດໜ້າໂດຍ:** ທະນາທິບ ອິນທິວົງ

**ຮູບພາບ:** © GIZ/ພູນຊັບ ເທວົງສາ

**ພິມໂດຍ:** ໂຮງພິມ ສັນຕິພາບ




**ສະແກນ ຄິວອາร໌ໂຄດ**
ເພື່ອເຂົ້າເບິ່ງຂໍ້ມູນເພີ່ມເຕີມ ກ່ຽວກັບ
**ອສຄ ແລະ ສູນບໍລິການ ອສຄ**

**dct.lncci.la**